ສາທາລະນະ ລັດປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************************

ເລກທີ 3578/ກງ

ກະຊວງການເງິນ

ນະຄອນຫຼວງວຽງຈັນ, ລົງວັນທີ 19 DEC 2012

# ຄຳແນະນຳ

## ຂອງລັດຖະມົນຕີວ່າການກະຊວງການເງິນ

## ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍດ້ານພາສີ-ອາກອນ ຕາມນະໂຍບາຍສົ່ງເສີມການລົງທຶນ

***************************

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009.
- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 119/ນຍ, ລົງວັນທີ 20/04/2011, ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສົ່ງເສີມການລົງທຶນ.
- ອີງຕາມ ບົດບັນທຶກມອບຮັບວຽກງານລະຫວ່າງ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງອຸດສາຫະກຳ-ການຄ້າ ສະບັບລົງວັນທີ 10/10/2011.

ລັດຖະມົນຕີວ່າການກະຊວງການເງິນ ອອກຄຳແນະນຳ :

### I. ຈຸດປະສົງ

ຈຸດປະສົງຂອງ ຄຳແນະນຳສະບັບນີ້ ແມ່ນເພື່ອຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009, ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 119/ນຍ, ລົງວັນທີ 20/04/2011 ມາດຕາ 37 ແລະ ມາດຕາ 38, ແນໃສ່ເພື່ອກຳນົດຫຼັກການ, ນະໂຍບາຍດ້ານພາສີ-ອາກອນ, ຂັ້ນຕອນ ແລະ ວິທີການດຳເນີນງານໃນການອະນຸມັດຮັບຮອງແຜນນຳເຂົ້າວັດຖຸດິບ, ວັດສະດຸກໍ່ສ້າງ, ອຸປະກອນ, ອາໄຫລ່, ເຄື່ອງຈັກ, ພາຫະນະ, ກົນຈັກ ແລະ ອື່ນໆ ເພື່ອມາຮັບໃຊ້ກິດຈະການລົງທຶນ, ສ້າງເງື່ອນໄຂອຳນວຍຄວາມສະດວກແກ່ຜູ້ລົງທຶນ ຢູ່ ສປປ ລາວ.

### II. ຫຼັກການການຮັບຮອງແຜນການປະຈຳປີ

ຜູ້ລົງທຶນ ມີໜ້າທີ່ໃນການສ້າງແຜນນຳເຂົ້າປະຈຳປີ, ຖ້າເປັນການຂໍລົງທຶນໃໝ່ໃຫ້ກຳນົດແຜນນຳເຂົ້າເປັນອັນລວມ ໂດຍແຍກເປັນບັນຊີການນຳເຂົ້າວັດຖຸດິບ, ວັດຖຸອຸປະກອນຮັບໃຊ້ການຜະລິດ, ແນວພັນ, ອາໄຫຼ່ ແລະ ອື່ນໆ ທີ່ຈະນຳເຂົ້າໃນແຕ່ລະປີ ແລະ ບັນຊີການນຳເຂົ້າວັດສະດຸກໍ່ສ້າງ ເພື່ອ

ນຳມາກໍ່ສ້າງພື້ນຖານໂຄງລ່າງ; ພາຫະນະ, ກົນຈັກ ເພື່ອມາຮັບໃຊ້ການເຄື່ອນໄຫວທຸລະກິດ ແລະ ເຄື່ອງໃຊ້ຫ້ອງການ ເພື່ອປະກອບເປັນຊັບສົມບັດຄົງທີ່ ຊຶ່ງອະນຸຍາດໃຫ້ນຳເຂົ້າຍົກເວັ້ນພາສີ ພຽງຄັ້ງດຽວໃນເວລາສ້າງຕັ້ງວິສາຫະກິດ.

ການອະນຸຍາດໃຫ້ນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ຕ້ອງໃຫ້ເໝາະສົມກັບບໍລິມາດຂອງວຽກງານ ໂດຍອີງໃສ່ບົດວິພາກເສດຖະກິດ-ເຕັກນິກ ແລະ ຄວາມຕ້ອງການຕົວຈິງຂອງແຕ່ລະໂຄງການ ໂດຍມີການຢັ້ງຢືນຮັບຮອງຢ່າງເປັນທາງການຈາກຂະແໜງການກ່ຽວຂ້ອງ ແລະ ບໍ່ໃຫ້ເກີນທຶນຈົດທະບຽນຂອງວິສາຫະກິດ.

ຜູ້ລົງທຶນ ຕ້ອງໄດ້ຍື່ນແຜນນຳເຂົ້າປະຈຳປີ ແລະ ເອກະສານປະກອບຄັດຕິດ, ຄື : ໃບສະເໜີ, ໃບທະບຽນວິສາຫະກິດ ຫຼື ໃບທະບຽນອາກອນ ສຳລັບກິດຈະການທົ່ວໄປ ແລະ ໃບສຳປະທານ ສຳລັບກິດຈະການສຳປະທານ, ໃບຢັ້ງຢືນການຖອກທຶນຈົດທະບຽນ ( ຕາມທີ່ກຳນົດໃນມາດຕາ 4 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 119/ນຍ ລົງວັນທີ 20 ເມສາ 2011), ແລະ ບົດວິພາກເສດຖະກິດ ຍື່ນຕໍ່ຂະແໜງການເງິນ ຫຼື ຫ້ອງການບໍລິການປະຕູດຽວຂອງຂະແໜງແຜນການແລະການລົງທຶນ.

## III. ນະໂຍບາຍສົ່ງເສີມດ້ານພາສີ-ອາກອນ

ວິສະຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນກ່ອນກົດໝາຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ ລົງວັນທີ 8 ກໍລະກົດ 2009, ແລະ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 119/ນຍ ລົງວັນທີ 20 ເມສາ 2011, ທີ່ຕ້ອງການໄດ້ຮັບນະໂຍບາຍດ້ານພາສີຂາເຂົ້າແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້, ຖ້າບໍ່ມີຈຸດປະສົງ ຕ້ອງການໄດ້ຮັບນະໂຍບາຍດ້ານພາສີ-ອາກອນ ສຳລັບການນຳເຂົ້າຕາມ ກົດໝາຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ ລົງວັນທີ 8 ກໍລະກົດ 2009, ແມ່ນສາມາດສືບຕໍ່ປະຕິບັດນະໂຍບາຍດ້ານພາສີ-ອາກອນ ສຳລັບການນຳເຂົ້າວັດຖຸດິບ, ອຸປະກອນ, ອາໄຫຼ່ ແລະ ອື່ນໆ ຕາມເງື່ອນໄຂທີ່ກົດໝາຍສົ່ງເສີມການລົງທຶນ ໄດ້ກຳນົດ ໃນໃບອະນຸຍາດສົ່ງເສີມການລົງທຶນ.

ວິສະຫະກິດ ທີ່ໄດ້ຮັບການລົງທຶນ ຕາມກົດໝາຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ ລົງວັນທີ 8 ກໍລະກົດ 2009, ຕ້ອງໄດ້ປະຕິບັດນະໂຍບາຍດ້ານພາສີເຂົ້າ ຕາມທີ່ກຳນົດໄວ້ໃນ ດຳລັດນາຍົກລັດຖະມົນຕີສະບັບເລກທີ 119/ນຍ ລົງວັນທີ 20 ເມສາ 2011, ມາດຕາ 39, ມາດຕາ 40, ມາດຕາ 41, ມາດຕາ 42, ມາດຕາ 43 ແລະ ມາດຕາ 44 ຢ່າງເຂັ້ມງວດ.

## IV. ການສ້າງແຜນນຳເຂົ້າປະຈຳປີ

ການສ້າງແຜນນຳເຂົ້າປະຈຳປີ ຂອງວິສະຫະກິດແມ່ນເອກະສານທາງການ ທີ່ເປັນຂໍ້ມູນໃຫ້ພາກສ່ວນລັດທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ກວດກາ ແລະ ປະເມີນຜົນ, ຊຶ່ງຕ້ອງປະຕິບັດດັ່ງນີ້ :

1. ການນຳເຂົ້າວັດຖຸດິບ, ແນວພັນ, ວັດສະດຸກໍ່ສ້າງ, ອຸປະກອນ, ເຄື່ອງມື, ອາໄຫລ່, ເຄື່ອງຈັກ, ເຄື່ອງໃຊ້ຫ້ອງການ, ພາຫະນະ, ກົນຈັກ ແລະ ອື່ນໆ ທີ່ນຳເຂົ້າມາຮັບໃຊ້ວິສະຫະກິດ ໃນຈຳນວນ ແລະ ບໍລິມາດ ຕ້ອງເໝາະສົມກັບຂະໜາດການລົງທຶນ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍໂຄງການເທົ່ານັ້ນ.
2. ແຜນນຳເຂົ້າປະຈຳປີ ແມ່ນຜູ້ລົງທຶນ ເປັນຜູ້ສ້າງແລະກຳນົດຕາມຄວາມຕ້ອງການຕົວຈິງ ເພື່ອນຳເຂົ້າມາຮັບໃຊ້ການພັດທະນາກິດຈະການລົງທຶນຂອງຕົນ, ຊຶ່ງປະກອບມີຂໍ້ມູນ, ຄື :
   - ເລກລະຫັດເຄົ້າ ຕາມສາລະບານສິນຄ້າ 4 ຕົວເລກ,
   - ລາຍການສິນຄ້າ,
   - ຈຳນວນສິນຄ້າ,
   - ນ້ຳໜັກສິນຄ້າ,
   - ມູນຄ່າສິນຄ້າ,
3. ບັນດາລາຍການສິນຄ້າ, ເຄື່ອງຂອງ ທີ່ຕ້ອງການນຳເຂົ້າ ຕ້ອງກຳນົດເປັນແຕ່ລະບັນຊີ, ຄື :
   - ບັນຊີແຜນນຳເຂົ້າຍົກເວັ້ນພາສີ-ອາກອນ,
   - ບັນຊີແຜນນຳເຂົ້າຍົກເວັ້ນພາສີຂາເຂົ້າ,
   - ບັນຊີແຜນນຳເຂົ້າຊົ່ວຄາວ:
   - ບັນຊີແຜນນຳເຂົ້າຫຼຸດຜ່ອນພາສີ-ອາກອນ.
4. ການສະເໜີແຜນນຳເຂົ້າປະຈຳປີຂອງວິສາຫະກິດ ສຳລັບການລົງທຶນຂັ້ນສູນກາງ ໃຫ້ຍື່ນທີ່ ກົມພາສີ, ສຳລັບການລົງທຶນຂັ້ນທ້ອງຖິ່ນ ຖ້າຫາກແຂວງໃດມີການສ້າງຕັ້ງຫ້ອງການບໍລິການປະຕູດຽວ ຂອງຂະແໜງແຜນການແລະລົງທຶນ ແມ່ນໃຫ້ຍື່ນທີ່ຫ້ອງການບໍລິການປະຕູດຽວ, ຖ້າແຂວງໃດທີ່ບໍ່ທັນມີການສ້າງຕັ້ງຫ້ອງການດັ່ງກ່າວ ໃຫ້ຍື່ນທີ່ພະແນກການເງິນປະຈຳແຂວງ ບ່ອນທີ່ວິສາຫະກິດຕັ້ງຢູ່.
5. ແຜນນຳເຂົ້າປະຈຳປີ ທີ່ຖືກຮັບຮອງແລ້ວ ບໍ່ອະນຸຍາດໃຫ້ມີການປ່ຽນແປງ ຫຼື ດັດແກ້ ຂໍ້ມູນໄດ້ໂດຍລຳພັງ.

   - ແຜນນຳເຂົ້າປະຈຳປີ ມີອາຍຸການນຳໃຊ້ພາຍໃນກຳນົດ 01 ປີ ຫຼື ຕາມໄລຍະເວລາຂອງການປະຕິບັດໂຄງການ. ພາຍຫຼັງໝົດອາຍຸການນຳໃຊ້, ບັນດາລາຍການສິນຄ້າ, ເຄື່ອງຂອງ ທີ່ກຳນົດໃນແຜນນຳເຂົ້າປະຈຳປີ ຊຶ່ງຍັງບໍ່ທັນນຳເຂົ້າ ຕ້ອງຖືກລົບລ້າງໃນທັນທີ.
6. ໃນກໍລະນີ ວິສະຫະກິດ ມີການເພີ່ມ ຫຼື ຫຼຸດຂະໜາດທຶນຂອງກິດຈະການ ສາມາດສະເໜີຂໍດັດແກ້ແຜນນຳເຂົ້າປະຈຳປີ ທີ່ຖືກຮັບຮອງແລ້ວ ນັ້ງຕັ້ງຕໍ່ປີ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບການດຳເນີນທຸລະກິດຕົວຈິງ.
7. ພາຫະນະ, ກົນຈັກ ແລະ ເຄື່ອງຈັກ ທີ່ໄດ້ຮັບນະໂຍບາຍນຳເຂົ້າຍົກເວັ້ນ ຫຼື ຫຼຸດຜ່ອນຄ່າພາສີ-ອາກອນ ຕາມກົດໝາຍສົ່ງເສີມການລົງທຶນ, ຕ້ອງໄດ້ນຳໃຊ້ເຂົ້າໃນວິສະຫະກິດ ຢ່າງຕ່ຳສຸດ 5 ປີ ຈຶ່ງອະນຸຍາດໃຫ້ມີການນຳເຂົ້າມາທົດແທນ, ແຕ່ກ່ອນຈະນຳເຂົ້າມາທົດແທນໄດ້ ພາຫະນະ, ກົນຈັກ ແລະ

ເຄື່ອງຈັກ ອັນເກົ່າ ຕ້ອງໄດ້ເສຍພາສີ-ອາກອນ ຕາມກົດໝາຍວ່າດ້ວຍພາສີ ໃນທັນທີ, ຈຶ່ງອະນຸຍາດໃຫ້ນຳເຂົ້າມາທົດແທນຕາມລະບຽບການ.

## V. ຂັ້ນຕອນການຮັບຮອງແຜນນຳເຂົ້າປະຈຳປີ

ພາຍຫລັງທີ່ຜູ້ລົງທຶນ ໄດ້ຍື່ນເອກະສານເພື່ອຂໍອະນຸຍາດແຜນນຳເຂົ້າປະຈຳປີ, ຂະແໜງການເງິນ ຫຼື ຫ້ອງການບໍລິການປະຕູດຽວ ຂອງຂະແໜງແຜນການແລະລົງທຶນ ຕ້ອງໄດ້ເອົາໃຈໃສ່ຄົ້ນຄ້ວາ ແລະ ດຳເນີນການຕາມຂັ້ນຕອນທີ່ກຳນົດໃນ ມາດຕາ 38 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 119/ນຍ ລົງວັນທີ 20/04/2011. ສ່ວນການຮັບຮອງແຜນນຳເຂົ້າປະຈຳປີ ໃຫ້ປະຕິບັດຄື :

+ ສຳລັບການລົງທຶນຂັ້ນສູນກາງ : ກົມພາສີ ຕ້ອງໄດ້ສັງລວມແຜນນຳເຂົ້າປະຈຳປີ ຄົ້ນຄວ້າ ແລະ ນຳສະເໜີ ລັດຖະມົນຕີວ່າການກະຊວງການເງິນ ເພື່ອພິຈາລະນາອອກຂໍ້ຕົກລົງຮັບຮອງແຜນນຳເຂົ້າປະຈຳປີ. ຈາກນັ້ນ, ກົມພາສີ ຕ້ອງໄດ້ແຈກຢາຍແຜນນຳເຂົ້າປະຈຳປີ ພ້ອມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ໃຫ້ວິສາຫະກິດ ແລະ ຂະແໜງການກ່ຽວຂ້ອງ ເພື່ອຊາບ, ພ້ອມທັງອອກໜັງສືແນະນຳ ດ່ານພາສີບ່ອນນຳເຂົ້າ ສິນຄ້າ, ເຄື່ອງຂອງ ເພື່ອຈັດຕັ້ງປະຕິບັດ ແລະ ອຳນວຍຄວາມສະດວກຕາມລະບຽບການ.

ໃນກໍລະນີ ບາງໂຄງການ ທີ່ຂະແໜງການລັດກ່ຽວຂ້ອງໄດ້ເປັນເຈົ້າການ ຈັດກອງປະຊຸມຄົ້ນຄ້ວາກ່ຽວກັບແຜນນຳເຂົ້າປະຈຳ ໂດຍປະກອບມີພາກສ່ວນກ່ຽວຂ້ອງ ລວມທັງກົມພາສີເຂົ້າຮ່ວມພິຈາລະນາຄົ້ນຄ້ວາ, ກົມພາສີ ສາມາດຮັບຮອງຜົນຂອງກອງປະຊຸມດັ່ງກ່າວ ເພື່ອນຳສະເໜີ ລັດຖະມົນຕີກະຊວງການເງິນ ພິຈາລະນາອອກຂໍ້ຕົກລົງຮັບຮອງແຜນນຳເຂົ້າປະຈຳປີ.

ສຳລັບການນຳເຂົ້ານອກແຜນປະຈຳປີ ເປັນຕົ້ນ ປະເພດອຸປະກອນຮັບໃຊ້ ຫຼື ອາໄຫຼ່ສຸກເສີນເພື່ອທົດແທນອັນເກົ່າທີ່ເປ່ເພ ຊຶ່ງມູນຄ່າລວມທັງໝົດບໍ່ເກີນ 30.000 ໂດລາສະຫະລັດ ແລະ ອະນຸຍາດໃຫ້ບໍ່ເກີນ ສອງເທື່ອຕໍ່ປີ ທີ່ມີການຢັ້ງຢືນຈາກຂະແໜງການລັດທີ່ກ່ຽວຂ້ອງ ແມ່ນມອບໃຫ້ກົມພາສີ ເປັນຜູ້ພິຈາລະນາຄົ້ນຄ້ວາອະນຸມັດຕາມລະບຽບການ; ໃນກໍລະນີມູນຄ່າລວມເກີນ 30.000 ໂດລາ ຕ້ອງໄດ້ຄົ້ນຄວ້າຮ່ວມກັບຂະແໜງການກ່ຽວຂ້ອງ ແລ້ວຈຶ່ງພິຈາລະນາຕາມລະບຽບການ.

+ ສຳລັບການລົງທຶນຂັ້ນທ້ອງຖິ່ນ : ພະແນກການເງິນປະຈຳແຂວງ ຫຼື ຫ້ອງການບໍລິການປະຕູດຽວ ຂອງຂະແໜງແຜນການແລະການລົງທຶນ ຕ້ອງໄດ້ສັງລວມແຜນນຳເຂົ້າປະຈຳປີ ແລະ ນຳສະເໜີ ຄະນະສົ່ງເສີມການລົງທຶນຂັ້ນທ້ອງຖິ່ນ ຊຶ່ງຂຽນຫຍໍ້ ' ຄລທ ' ຂັ້ນທ້ອງຖິ່ນ ເພື່ອພິຈາລະນາອອກຂໍ້ຕົກລົງຮັບຮອງແຜນປະຈຳປີ, ຈາກນັ້ນ ພະແນກການເງິນ ຫຼື ຫ້ອງການບໍລິການປະຕູດຽວ ຕ້ອງໄດ້ແຈກຢາຍແຜນນຳເຂົ້າປະຈຳປີ ໃຫ້ວິສາຫະກິດ, ຂະແໜງການລັດທີ່ກ່ຽວຂ້ອງ ແລະ ດ່ານພາສີບ່ອນນຳເຂົ້າ.

ສຳລັບການນຳເຂົ້ານອກແຜນປະຈຳປີ ເປັນຕົ້ນ ປະເພດອຸປະກອນຮັບໃຊ້ ຫຼື ອາໄຫຼ່ສຸກເສີນເພື່ອທົດແທນອັນເກົ່າທີ່ເປ່ເພ ຊຶ່ງມູນຄ່າລວມທັງໝົດບໍ່ເກີນ 30.000 ໂດລາສະຫະລັດ ແລະ ອະນຸຍາດໃຫ້ບໍ່ເກີນສອງເທື່ອຕໍ່ປີ ທີ່ມີການຢັ້ງຢືນຈາກຂະແໜງການລັດທີ່ກ່ຽວຂ້ອງ, ພະແນກການເງິນປະ

ຈຳແຂວງ ຫຼື ຫ້ອງການບໍລິການປະຕູດຽວດັ່ງກ່າວ ຕ້ອງໄດ້ຄົ້ນຄວ້າປຶກສາຫາລືຮ່ວມກັບຂະແໜງກ່ຽວຂ້ອງ ເພື່ອນຳສະເໜີ ປະທານ ຄລທ ຂັ້ນທ້ອງຖິ່ນ ພິຈາລະນາອະນຸມັດ ຕາມລະບຽບການ.

## VI. ການຄຸ້ມຄອງແຜນການນຳເຂົ້າປະຈຳປີ

1. ມອບໃຫ້ ກົມພາສີ ກຳນົດມາດຕະການໃນການຄຸ້ມຄອງ ເພື່ອຈຳກັດບັນດາຊ່ອງຫວ່າງການສວຍໃຊ້ວັດຖຸອຸປະກອນທີ່ນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ໃຫ້ມີຄວາມຮັດກຸມ; ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອຈັດຕັ້ງຄຸ້ມຄອງການນຳໃຊ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບການ.
2. ດ່ານພາສີບ່ອນນຳເຂົ້າ ມີໜ້າທີ່ຄຸ້ມຄອງ, ກວດກາການນຳເຂົ້າຕົວຈິງ ຕາມແຜນການນຳເຂົ້າປະຈຳປີທີ່ຖືກຮັບຮອງແລ້ວ, ໂດຍສ້າງເປັນລະບົບຕິດຕາມການນຳເຂົ້າ ພ້ອມທັງສະຫຼຸບລາຍງານປະຈຳເດືອນ, ປະຈຳໄຕມາດ ສົ່ງໃຫ້ ຂະແໜງການເງິນ, ຂະແໜງແຜນການແລະການລົງທຶນ, ຂະແໜງອຸດສະຫະກຳ-ການຄ້າ ຢ່າງເປັນປົກະຕິ.

## VII. ການສ້າງແຜນນຳເຂົ້າຂອງໂຄງການຕ່າງໆ ນອກຈາກນະໂຍບາຍສົ່ງເສີມການລົງທຶນ

1. ການສ້າງແຜນນຳເຂົ້າຂອງ ໂຄງການຊ່ວຍເຫຼືອລ້າ ແລະ ກູ້ຢືມ ເພື່ອການພັດທະນາ ແມ່ນໃຫ້ນຳສະເໜີຫາ ກະຊວງແຜນການແລະການລົງທຶນ ເພື່ອຄົ້ນຄວ້າພິຈາລະນາ ຕາມດຳລັດນາຍົກ ລັດຖະມົນຕີ ວ່າດ້ວຍການຄຸ້ມຄອງແລະນຳໃຊ້ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ ສະບັບເລກທີ 75/ນຍ, ວັນທີ 20/03/2009.
2. ການສ້າງແຜນນຳເຂົ້າໂຄງການລົງທຶນຂອງລັດ, ແມ່ນໃຫ້ປະຕິບັດຕາມກົດໝາຍວ່າການລົງທຶນຂອງລັດ ເລກທີ 08/ສພຊ, ວັນທີ 26/11/2009.
3. ການສ້າງແຜນນຳເຂົ້າປະຈຳປີຂອງຜູ້ພັດທະນາ ຫຼື ຜູ້ລົງທຶນ ຢູ່ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍວ່າດ້ວຍເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

## VIII. ມາດຕະການຕໍ່ການກະທຳຜິດ

ວິສະຫະກິດໃດ ທີ່ໄດ້ຮັບອະນຸຍາດນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ດ້ວຍການຍົກເວັ້ນ, ຫຼຸດຜ່ອນ ຫຼື ນຳເຂົ້າຊົ່ວຄາວ ຕ້ອງນຳໃຊ້ເຂົ້າໃນເປົ້າໝາຍໂຄງການ, ຖ້າຫາກມີການສວຍໃຊ້ບໍ່ຖືກເປົ້າໝາຍ ນຳໄປຈຳໜ່າຍຂາຍພາຍໃນ ຫຼື ໂອນກຳມະສິດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນລັດກ່ຽວຂ້ອງ ແລະ ລັດຖະການພາສີ, ຕ້ອງຖືກດຳເນີນຄະດີຕາມລະບຽບກົດໝາຍພາສີ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ແລະ ແຜນນຳເຂົ້າປະຈຳປີ ທີ່ຖືກຮັບຮອງແລ້ວນັ້ນ ຕ້ອງຖືກລຶບລ້າງໃນທັນທີ.

## IX. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມພາສີ, ກົມສ່ວຍສາອາກອນ, ພະແນກການເງິນປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ ໃຫ້ຂະແໜງການກ່ຽວຂ້ອງ ແລະ ຜູ້ລົງທຶນ ໄດ້ຮັບຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

## X. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ,

ນຳສົ່ງ :

- ຫ້ອງວ່າການສູນກາງພັກ 1 ສະບັບ ເພື່ອຊາບ
- ຫ້ອງວ່າການລັດຖະບານ 1 ສະບັບ ເພື່ອຊາບ
- ລັດຖະມົນຕີວ່າການກະຊວງແຜນການແລະການລົງທຶນ 1 ສະບັບ ເພື່ອຊາບ
- ລັດຖະມົນຕີວ່າການກະຊວງອຸດສະຫະກຳ-ການຄ້າ 1 ສະບັບເພື່ອຊາບ
- ປະທານ ຄລທ ຂັ້ນທ້ອງຖິ່ນ ແຂວງລະ 1 ສະບັບ ເພື່ອຊາບ
- ບັນດາກົມກະຊວງອ້ອມຂ້າງກະຊວງການເງິນ 1 ສະບັບ ເພື່ອຊາບ

ພູເພັດ ຄຳພູນວົງ